# ບົດບັນທຶກການເຮັດວຽກ

**ລະຫວ່າງພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ ສປປ ລາວ**
**ກັບ ວິທະຍາໄລແພດສາດຮ່າຕິ່ງ, ວລ ວັດທະນາທຳ, ກິລາ ແລະ ທ່ອງທ່ຽວຫວຽນຢູ, ວລ ເຕັກນິກວິຊາຊີບ ແຂວງ ຮ່າຕິ່ງ ສສ ຫວຽດນາມ.**

---

ຕອນເຊົ້າຂອງວັນທີ 10 ພຶດສະພາ 2017, ເວລາ 09 ໂມງ 00 ນາທີ,ຢູ່ທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ ສປປ ລາວ ໄດ້ຈັດຕັ້ງກອງປະຊຸມພົບປະແລກປ່ຽນ,ປຶກສາຫາລືກ່ຽວກັບແຜນການກໍ່ສ້າງຊັບພະຍາກອນມະນຸດໃນສົກປີ 2017-2018 ລະຫວ່າງພະແນກສຶກສາທິການ ແລະ ກິລາ ແຂວງຊຽງຂວາງ ກັບບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ ສສ ຫວຽດນາມ.

**ຄະນະຜູ້ແທນຝ່າຍແຂວງຊຽງຂວາງລວມມີ:**

1. ທ່ານ ທອງເພັດ ອິນທະໄຊ — ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ຫົວໜ້າຄະນະ
2. ທ່ານ ລິດບົວສະຫວັນ — ຫົວໜ້າຂະແໜງອາຊີວະສຶກສາ
3. ທ່ານ ວົງສາ ລໍ່ເຢຍ — ຫົວໜ້າຂະແໜງບໍລິຫານ - ການເງິນ
4. ທ່ານ ໄຊປັນຍາ ໄຊຍະຈິດ — ຫົວໜ້າຂະແໜງມັດທະຍົມ
5. ທ່ານ ສີພັນ ພັດທະນາ — ຫົວໜ້າຂະແໜງສະຖິຕິ- ແຜນການ
6. ທ່ານ ທອງວິດາ ບຸນຈັນໄຊ — ວິຊາການຂະແໜງອາຊີວະສຶກສາ

❖ **ຝ່າຍແຂວງຮ່າຕິ່ງປະກອບມີ:**

1. ທ່ານ ຫງວຽນ ວັນ — ຮອງອຳນວຍການວິທະຍາໄລແພດສາດຮ່າຕິ່ງ ຫົວໜ້າຄະນະ
2. ທ່ານ ນາງ ດັ້ງ ທີ້ ທູ່ຍ ຮັງ — ຮອງອຳນວຍການວິທະຍາໄລ ວທ ກລ ທທ
3. ທ່ານ ນາງ ຫວຽນ ທີ້ ແທັງ ຍານ — ຮອງຫ/ໜຂະແໜງຄັດເລືອກນັກສຶກສາ ວລ ເຕັກນິກວິຊາຊີບ
4. ທ່ານ ເລ ຈອງ ຮຽນ — ວກ ພະແນກພົວພັນຕ່າງປະເທດ

❖ **ເນື້ອໃນເຮັດວຽກ:** ພວກເຮົາໄດ້ຕົກລົງເປັນເອກະພາບບາງວຽກທີ່ສຳຄັນດັ່ງນີ້:

1. ຈຳນວນນັກສຶກສາຈາກແຂວງຊຽງຂວາງທີ່ບັນດາວິທະຍາໄລຮັບໄດ້ຕໍ່ປີ:
   - ວິທະຍາໄລແພດສາດ: 100 – 200 ຄົນ/ປີ
   - ວິທະຍາໄລວັດທະນະທຳ, ກິລາ ແລະ ທ່ອງທ່ຽວຫງວຽນຢູ: ບໍ່ຈຳກັດຈຳນວນ
   - ວິທະຍາໄລເຕັກນິກວິຊາຊີບ: ບໍ່ຈຳກັດຈຳນວນ
2. ຄ່າໃຊ້ຈ່າຍຕ່າງໆ:
   - ວິທະຍາໄລແພດສາດ: ຄ່າຮຽນກຽມພາສາ 300 ໂດລາ/ຄົນ/ປີ; ຮຽນວິຊາສະເພາະ 400 ໂດລາ/ຄົນ/ປີ ຄ່າຫໍພັກ 50 ໂດລາ/ຄົນ/ປີ( ຕະຫຼອດຊຸດຮຽນບໍ່ປ່ຽນແປງ ) ( ຄ່າໄຟຟ້າ 2 500 ດົ່ງ/kwh, ຄ່ານ້ຳປະປາ 9 000 ດົ່ງ/ຄົນ/ປີ: ຄ່າດັ່ງກ່າວແມ່ນຈະມີການປ່ຽນແປງຕາມການກຳນົດຂອງລັດ )

- ວິທະຍາໄລວັດທະນະທຳ, ກິລາ ແລະ ທ່ອງທ່ຽວທາງວຽນຢູ: ຄ່າຮຽນກຽມພາສາ 250 ໂດລາ/ຄົນ/ປີ; ຮຽນວິຊາສະເພາະ 300 ໂດລາ/ຄົນ/ປີ, ຄ່າຫໍພັກ 50 ໂດລາ/ຄົນ/ປີ( ຕະຫຼອດຊຸດຮຽນບໍ່ປ່ຽນແປງ ), ( ໄຟຟ້າແຕ່ລະເດືອນໃຊ້ຟີ 10 kwh, ເກີນນັ້ນໄດ້ຈ່າຍຕາມລາຄາ 2 000 ດົ່ງ/kwh, ນ້ຳປະປາໃຊ້ຕາມໃຈ, ແຕ່ວ່າ 1 ເດືອນຈ່າຍ 30 000 ດົ່ງ/ຄົນ )
- ວິທະຍາໄລເຕັກນິກວິຊາຊີບ: ຄ່າຮຽນກຽມພາສາ 300 ໂດລາ/ຄົນ/ປີ; ຮຽນວິຊາສະເພາະ 400 ໂດລາ/ຄົນ/ປີ ຄ່າຫໍພັກ 50 ໂດລາ/ຄົນ/ປີ( ຕະຫຼອດຊຸດຮຽນບໍ່ປ່ຽນແປງ ), ( ຄ່າໄຟຟ້າ 2 500 ດົ່ງ/kwh, ຄ່ານ້ຳປະປາ 9 000 ດົ່ງ/ຄົນ/ປີ: ຄ່າດັ່ງກ່າວແມ່ນຈະມີການປ່ຽນແປງຕາມການກຳນົດຂອງລັດ )

3. ດ້ານນະໂຍບາຍ:
   - ວິທະຍາໄລແພດສາດ: ໃນ 10 ຄົນ, ໂຮງຮຽນຈະຍົກເວັ້ນຄ່າຮຽນ, ຄ່າຫໍພັກໃຫ້ 1 ຄົນ ( ຈີນຈີບ )
   - ວິທະຍາໄລວັດທະນະທຳ, ກິລາ ແລະ ທ່ອງທ່ຽວທາງວຽນຢູ: ໃນ 10 ຄົນ, ໂຮງຮຽນຈະຍົກເວັ້ນຄ່າຮຽນ, ຄ່າຫໍພັກໃຫ້ 2 ຄົນ ( ຈີນຈີບ )
   - ວິທະຍາໄລເຕັກນິກວິຊາຊີບ: ໃນ 10 ຄົນ, ໂຮງຮຽນຈະຍົກເວັ້ນຄ່າຮຽນ, ຄ່າຫໍພັກໃຫ້ 1 ຄົນ ( ຈີນຈີບ )

ບົດບັນທຶກສະບັບນີ້ຈະໄດ້ສ້າງຂຶ້ນເປັນພາສາລາວ 4 ສະບັບແຕ່ລະຝ່າຍເກັບມ້ຽນ 2 ສະບັບ.

| | |
|---|---|
| ຕາງໜ້າພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ | ຕາງໜ້າວິທະຍາໄລອ້ອມຂ້າງແຂວງຮ່າຕິງ |
| ຮອງຫົວໜ້າພະແນກ | ຮອງອຳນວຍການວິທະຍາໄລແພດສາດ |
| ທ່ານ ທອງເພັດ ອິນທະໄຊ | ທ່ານ ທາງວຽນວັນ |